ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0060/ອຄ.ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 12 JAN 2017

# ຂໍ້ຕົກລົງ

# ວ່າດ້ວຍທຸລະກິດຂາຍກົງ

- ອີງຕາມກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ), ສະບັບເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013.
- ອີງຕາມກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້, ສະບັບເລກທີ 2/ສພຊ, ລົງວັນທີ 30 ມິຖຸນາ 2010.
- ອີງຕາມດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງ ອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 522/ນຍ, ລົງວັນທີ 23 ທັນວາ 2011.
- ອີງຕາມການສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0013/ກຄພນ, ລົງວັນທີ 04 ມັງກອນ 2017.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ1

## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫລັກການ, ລະບຽບການ ແລະ ມາດຕະການ ເພື່ອຄຸ້ມຄອງ ການດຳເນີນທຸລະກິດຂາຍກົງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ສ້າງຄວາມສະດວກໃນການຈຳໜ່າຍສິນຄ້າ ເພື່ອຮັບໃຊ້ສັງຄົມ, ປົກປ້ອງຜົນປະໂຫຍດລວມຂອງຊາດ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້, ຜູ້ຂາຍອິດສະຫຼະ, ຕົວແທນຂາຍກົງ ແລະ ຜູ້ດຳເນີນທຸລະກິດຂາຍກົງ, ປະກອບສ່ວນສ້າງວຽກເຮັດງານທຳ, ສ້າງລາຍໄດ້ ແລະ ແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ.

### ມາດຕາ 2 ທຸລະກິດຂາຍກົງ

ທຸລະກິດຂາຍກົງ ແມ່ນການດຳເນີນທຸລະກິດ ຂາຍສິນຄ້າ ໃນລັກສະນະການນຳສະເໜີຂາຍໂດຍກົງ ຕໍ່ຜູ້ຊົມໃຊ້ ເຖິງທີ່ຢູ່ອາໄສ ແລະ ສະຖານທີ່ຕ່າງໆ.

ມາດຕາ 3 ອະທິບາຍຄຳສັບ

ຄຳສັບຕ່າງໆໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ຜູ້ຊົມໃຊ້ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຊື້ ແລະ ນຳໃຊ້ສິນຄ້າ ແລະ ການບໍລິການ ຢ່າງຖືກຕ້ອງໂດຍບໍ່ມີຈຸດປະສົງທາງການຄ້າ;
2. ຜູ້ດຳເນີນທຸລະກິດຂາຍກົງ ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ສະໜອງສິນຄ້າໃຫ້ແກ່ຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
3. ຫົວໜ່ວຍທຸລະກິດ ໝາຍເຖິງ ວິສາຫະກິດ ຫຼື ການຈັດຕັ້ງທຸລະກິດຂອງ ບຸກຄົນ ຫຼື ນິຕິບຸກຄົນ ຊຶ່ງປະກອບດ້ວຍຊື່, ທຶນ, ການບໍລິຫານຈັດການ, ສຳນັກງານ ແລະ ໄດ້ຂຶ້ນທະບຽນຕາມກົດໝາຍວ່າດ້ວຍ ວິສາຫະກິດ.
4. ຕົວແທນຂາຍກົງ ໝາຍເຖິງ ຜູ້ທີ່ສະໜອງສິນຄ້າ ໃຫ້ແກ່ຜູ້ຂາຍອິດສະຫຼະ ຫຼື ຂາຍສິນຄ້າໂດຍກົງໃຫ້ຜູ້ຊົມໃຊ້;
5. ຜູ້ຂາຍອິດສະຫຼະ ໝາຍເຖິງ ຜູ້ທີ່ຂາຍສິນຄ້າໂດຍກົງໃຫ້ແກ່ ຜູ້ຊົມໃຊ້;
6. ແຜນການຈ່າຍຄ່າຕອບແທນ ໝາຍເຖິງ ແຜນການຕະຫຼາດ ຫຼື ແຜນການທີ່ຜູ້ດຳເນີນທຸລະກິດຂາຍກົງສ້າງຂຶ້ນເພື່ອກຳນົດວິທີການຈ່າຍຄ່າຕອບແທນໃຫ້ສະມາຊິກ ໂດຍລະບຸວິທີການຈ່າຍຢ່າງຊັດເຈນ;
7. ຄວາມລັບທາງທຸລະກິດ ໝາຍເຖິງ ຂໍ້ມູນກ່ຽວກັບກຳມະວິທີ, ວິທີການຜະລິດ, ການດຳເນີນທຸລະກິດ ຫຼື ການບໍລິການ ເຊິ່ງມີຄວາມສຳຄັນຕໍ່ການດຳເນີນທຸລະກິດ;
8. ເງິນຄ້ຳປະກັນໃນການດຳເນີນທຸລະກິດຂາຍກົງ ໝາຍເຖິງ ຈຳນວນເງິນທີ່ຜູ້ດຳເນີນທຸລະກິດຂາຍກົງນຳມາຄ້ຳປະກັນໃນການເຄື່ອນໄຫວທຸລະກິດຂາຍກົງ ເພື່ອຮັບປະກັນຕໍ່ກັບຜູ້ທີ່ເຂົ້າຮ່ວມທຸລະກິດຂາຍກົງ.

ມາດຕາ 4 ຫຼັກການພື້ນຖານກ່ຽວກັບການດຳເນີນທຸລະກິດຂາຍກົງ

ການດຳເນີນທຸລະກິດຂາຍກົງ ຢູ່ ສປປ ລາວ ຕ້ອງປະຕິບັດຕາມຫລັກການພື້ນຖານຕົ້ນຕໍ ດັ່ງນີ້:

1. ຮັບປະກັນການຈຳໜ່າຍສິນຄ້າໃຫ້ມີຄຸນນະພາບ, ໄດ້ມາດຕະຖານ ຕາມທີ່ອົງການຮັບຜິດຊອບ ແລະ ຄຸ້ມຄອງກຳນົດໄວ້;
2. ຮັບປະກັນຄວາມປອດໄພທາງດ້ານຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊົມໃຊ້;
3. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ຄວາມຍຸຕິທຳ ໃນການປະຕິບັດສັນຍາຈ່າຍຄ່າຕອບແທນ;
4. ຮັບປະກັນການມີສ່ວນຮ່ວມຂອງປະຊາຊົນ ແລະ ສັງຄົມ ໃນການຕິດຕາມ, ກວດກາ ການດຳເນີນທຸລະກິດຂາຍກົງ;
5. ຮັບປະກັນການແຂ່ງຂັນທາງທຸລະກິດທີ່ເປັນທຳ;

6. ສອດຄ່ອງກັບກົດໝາຍ, ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ.

ມາດຕາ 5 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທາງທຸລະກິດ ທັງພາຍໃນ ແລະ ຕ່າງປະເທດທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດ ຂາຍກົງ ຢູ່ ສປປ ລາວ.

## ໝວດທີ 2
## ການດຳເນີນທຸລະກິດຂາຍກົງ

ມາດຕາ 6 ການດຳເນີນທຸລະກິດຂາຍກົງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທາງທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ມີສິດ ດຳເນີນທຸລະກິດຂາຍກົງ ໂດຍສອດຄ່ອງກັບຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 7 ທຶນຈົດທະບຽນ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທາງທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະດຳເນີນທຸລະກິດຂາຍກົງ ຕ້ອງມີທຶນຈົດທະບຽນທັງໝົດບໍ່ຫຼຸດ ສີ່ສິບຕື້ກີບ.

ມາດຕາ 8 ຂັ້ນຕອນການຂໍອະນຸຍາດດຳເນີນທຸລະກິດຂາຍກົງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທາງທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະດຳເນີນທຸລະກິດຂາຍກົງໄດ້ ຕ້ອງປະຕິບັດຕາມຂັ້ນຕອນດັ່ງນີ້:

1. ເອກະສານປະກອບ:
    - ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດຂາຍກົງ;
    - ສຳເນົາໃບທະບຽນວິສາຫະກິດ ທີ່ລະບຸໝວດຂາຍກົງ;
    - ແຜນການຈ່າຍຄ່າຕອບແທນ;
    - ສັນຍາລະຫວ່າງຜູ້ດຳເນີນທຸລະກິດຂາຍກົງ ກັບຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
    - ຕົວຢ່າງບັດສະມາຊິກຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
    - ສຳເນົາໃບຢັ້ງຢືນເງິນຄ້ຳປະກັນຈາກທະນາຄານທີ່ຫົວໜ່ວຍທຸລະກິດໄດ້ເປີດບັນຊີໄວ້.

2. ການຍື່ນເອກະສານ ແລະ ຂັ້ນຕອນການພິຈາລະນາ:

    2.1 ຍື່ນເອກະສານມາຍັງກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ;

    2.2 ກົມການຄ້າພາຍໃນ ພິຈາລະນາ ແລະ ອອກໃບອະນຸຍາດດຳເນີນທຸລະກິດຂາຍກົງ ພາຍໃນກຳນົດ 10 ວັນລັດຖະການ ໃນກໍລະນີເອກະສານຖືກຕ້ອງ ແລະ ຄົບຖ້ວນ.

ມາດຕາ 9 ເງິນຄ້ຳປະກັນໃນການດຳເນີນທຸລະກິດຂາຍກົງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທາງທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ທີ່ຈະດຳເນີນທຸລະກິດຂາຍກົງ ຕ້ອງມີເງິນຄ້ຳປະກັນ ຕາມເງື່ອນໄຂດັ່ງນີ້:

1. ຕ້ອງມີເງິນຄ້ຳປະກັນຈຳນວນ 5% ຂອງທຶນຈົດທະບຽນທັງໝົດ;
2. ເປີດບັນຊີເງິນຝາກປະຈຳ ຈຳນວນ 5% ຂອງທຶນຈົດທະບຽນທັງໝົດ ຢູ່ທະນາຄານທຸລະກິດໃດໜຶ່ງ ແລະ ທະນາຄານນັ້ນ ອອກໃບຢັ້ງຢືນກ່ຽວກັບການເປີດບັນຊີ ເງິນຄ້ຳປະກັນຂອງຫົວໜ່ວຍທຸລະກິດດັ່ງກ່າວ;
3. ຈຳນວນເງິນທີ່ໄດ້ເປີດບັນຊີ ເງິນຄ້ຳປະກັນນັ້ນ ທະນາຄານຕ້ອງໄດ້ຮັກສາໄວ້ຕະຫຼອດເວລາການເຄື່ອນໄຫວ ຂອງຫົວໜ່ວຍທຸລະກິດ ທີ່ດຳເນີນທຸລະກິດຂາຍກົງ;
4. ໃນກໍລະນີຫົວໜ່ວຍທຸລະກິດຕ້ອງການຖອນເງິນຄ້ຳປະກັນດັ່ງກ່າວ ຕ້ອງໄດ້ຮັບການຢັ້ງຢືນຈາກ ອົງການຄຸ້ມຄອງທຸລະກິດຂາຍກົງ;
5. ຫົວໜ່ວຍທຸລະກິດຈະໄດ້ຮັບເງິນດອກເບ້ຍຕາມຈຳນວນເງິນຄ້ຳປະກັນທັງໝົດຈາກການເປີດບັນຊີເງິນຝາກປະຈຳ. ກຳນົດເວລາຝາກຕ່ຳສຸດ 1 ປີ ແລະ ຕໍ່ອາຍຸຕາມການຮັບຮອງ ຂອງອົງການຄຸ້ມຄອງທຸລະກິດຂາຍກົງ;
6. ໃນກໍລະນີອົງການຄຸ້ມຄອງທຸລະກິດຂາຍກົງ ບໍ່ເຫັນດີ ອອກໃບອະນຸຍາດໃຫ້ດຳເນີນທຸລະກິດຂາຍກົງໃຫ້ຫົວໜ່ວຍທຸລະກິດດັ່ງກ່າວ ຫົວໜ່ວຍທຸລະກິດນັ້ນສາມາດຖອນເງິນຄ້ຳປະກັນນັ້ນຄືນໄດ້ໂດຍໄດ້ຮັບການຢັ້ງຢືນຈາກອົງການຄຸ້ມທຸລະກິດຂາຍກົງ;
7. ກໍລະນີທີ່ຜູ້ດຳເນີນທຸລະກິດຂາຍກົງປະສົບບັນຫາບໍ່ສາມາດຊຳລະ ຄ່າເສັຍຫາຍທາງແພ່ງໃຫ້ແກ່ຕົວແທນຈຳໜ່າຍທຸລະກິດຂາຍກົງ ຫຼື ຜູ້ຂາຍອິດສະຫຼະ ອົງການຄຸ້ມຄອງທຸລະກິດຂາຍກົງສາມາດນຳໃຊ້ເງິນຄ້ຳປະກັນນັ້ນໄດ້ເພື່ອສະສາງ.

ມາດຕາ 10 ສິດ, ໜ້າທີ່ ແລະ ພັນທະຂອງຜູ້ດຳເນີນທຸລະກິດຂາຍກົງ

ຜູ້ດຳເນີນທຸລະກິດຂາຍກົງມີສິດ, ໜ້າທີ່ ແລະ ພັນທະດັ່ງນີ້:

1. ເຮັດສັນຍາກັບຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ ໂດຍລະບຸເນື້ອໃນຕົ້ນຕໍ :
   - ການຈ່າຍຄ່າຕອບແທນຈະແຈ້ງ ຕາມແຜນການຈ່າຍຄ່າຕອບແທນ;
   - ຄ່າທຳນຽມການສະມັກເຂົ້າເປັນສະມາຊິກ, ຄ່າຝຶກອົບຮົມ, ຄ່າອຸປະກອນສິ່ງເສີມການຂາຍ ຫຼື ຄ່າທຳນຽມອື່ນໆ;
   - ສັນຍາຈະແຈ້ງກ່ຽວກັບຜູ້ດຳເນີນທຸລະກິດຂາຍກົງຈະຮັບຊື້ສິນຄ້າ, ວັດຖຸອຸປະກອນ ສິ່ງເສີມການຂາຍ ແລະ ຊຸດຄູ່ມືຄືນ ຈາກຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
   - ລະບຸລາຄາສິນຄ້າ ທີ່ຈະຂາຍໃຫ້ຜູ້ຊົມໃຊ້.
2. ດຳເນີນທຸລະກິດ ສອດຄ່ອງກັບແຜນການຈ່າຍຄ່າຕອບແທນ (ໃນກໍລະນີມີການປ່ຽນແປງຕ້ອງໄດ້ແຈ້ງໃຫ້ອົງການຄຸ້ມຄອງທຸລະກິດຂາຍກົງຮັບຮອງເສັຍກ່ອນ);

3. ຝຶກອົບຮົມໃຫ້ແກ່ຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
4. ອອກບັດສະມາຊິກໃຫ້ແກ່ຕົວແທນຂາຍກົງ ແລະ ຜູ້ຂາຍອິດສະຫຼະ;
5. ສາມາດນຳໃຊ້ພາຫະນະສື່ມວນຊົນ ເພື່ອສະເໜີຂາຍສິນຄ້າ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
6. ເສຍພາສີ-ອາກອນ ແລະ ຄ່າບໍລິການທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ;
7. ສະຫຼຸບລາຍງານ ການດຳເນີນທຸລະກິດຂາຍກົງ ຕາມແຜນການຈ່າຍຄ່າຕອບແທນ ໃຫ້ອົງການຄຸ້ມຄອງທຸລະກິດຂາຍກົງ ທຸກໆ 06 ເດືອນ;
8. ປະຕິບັດຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 11 ສິດ,ໜ້າທີ່ ແລະ ພັນທະຂອງຕົວແທນຂາຍກົງ

ຕົວແທນຂາຍກົງມີສິດ, ໜ້າທີ່ ພັນທະດັ່ງນີ້:

1. ສະໝັກເປັນສະມາຊິກຂອງຜູ້ດຳເນີນທຸລະກິດຂາຍກົງ;
2. ດຳເນີນທຸລະກິດຕາມເງື່ອນໄຂຂອງສັນຍາທີ່ໄດ້ເຊັນ ກັບ ຜູ້ດຳເນີນທຸລະກິດຂາຍກົງ;
3. ສະໜອງສິນຄ້າ ໃຫ້ຜູ້ຂາຍອິດສະຫຼະ ຫຼື ຂາຍສິນຄ້າ ໃຫ້ຜູ້ຊົມໃຊ້ໂດຍກົງ;
4. ຂາຍສິນຄ້າໂດຍກົງ ເຖິງ ທີ່ຢູ່ອາໄສ ຂອງບຸກຄົນອື່ນ ແຕ່ຕ້ອງໄດ້ຮັບອະນຸຍາດຈາກເຈົ້າຂອງທີ່ຢູ່ອາໄສນັ້ນກ່ອນ;
5. ສະແດງ ບັດສະມາຊິກຕົວແທນຂາຍກົງໃນເວລາສະໜອງ ຫຼື ຂາຍສິນຄ້າ;
6. ເສຍພາສີ-ອາກອນ ແລະ ຄ່າບໍລິການທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ;
7. ປະຕິບັດຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ມາດຕາ 12 ສິດ, ໜ້າທີ່ ແລະ ພັນທະຂອງຜູ້ຂາຍອິດສະຫຼະ

ຜູ້ຂາຍອິດສະຫຼະ ມີສິດ,ໜ້າທີ່ ແລະ ພັນທະດັ່ງນີ້:

1. ສະໝັກເປັນສະມາຊິກຂອງຜູ້ດຳເນີນທຸລະກິດຂາຍກົງ ຫຼື ຕົວແທນຂາຍກົງ;
2. ປະຕິບັດຕາມສັນຍາທີ່ໄດ້ເຊັນ ກັບ ຜູ້ດຳເນີນທຸລະກິດຂາຍກົງ ຫຼື ຕົວແທນຂາຍກົງ;
3. ສະແດງ ບັດສະມາຊິກຜູ້ຂາຍອິດສະຫຼະໃນເວລາຂາຍສິນຄ້າ;
4. ເອົາສິນຄ້າ ໄປສະເໜີຂາຍ ໃຫ້ຜູ້ຊົມໃຊ້ໂດຍກົງ;
5. ສະເໜີຂາຍສິນຄ້າໂດຍກົງ ເຖິງ ທີ່ຢູ່ອາໄສ ຂອງບຸກຄົນອື່ນ ແຕ່ຕ້ອງໄດ້ຮັບອະນຸຍາດຈາກ ເຈົ້າຂອງທີ່ຢູ່ອາໄສນັ້ນກ່ອນ;
6. ເສຍພາສີ-ອາກອນ ແລະ ຄ່າບໍລິການທີ່ກ່ຽວຂ້ອງຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ;
7. ປະຕິບັດຕາມຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 3
## ຂໍ້ຫ້າມ

**ມາດຕາ 13 ຂໍ້ຫ້າມ ສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານມີພຶດຕິກຳດັ່ງນີ້:

1. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງ ຕາມຂໍ້ຕົກລົງສະບັບນີ້ ຕໍ່ຜູ້ດຳເນີນທຸລະກິດຂາຍກົງ, ຕົວແທນຂາຍກົງ, ຜູ້ຂາຍອິດສະຫຼະ ແລະ ຜູ້ຊົມໃຊ້;
2. ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ ແລະ ໜ້າທີ່ ເພື່ອຜົນປະໂຫຍດສ່ວນຕົວ, ຮັບສິນບົນ ທີ່ເນື່ອງມາຈາກ ທຸລະກິດຂາຍກົງ;
3. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທາງທຸລະກິດ, ກົດໜ່ວງຖ່ວງດຶງ ຫຼື ທຳລາຍເອກະສານກ່ຽວກັບທຸລະກິດຂາຍກົງ;
4. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 14 ຂໍ້ຫ້າມສຳລັບຜູ້ດຳເນີນ ທຸລະກິດຂາຍກົງ**

ຫ້າມຜູ້ດຳເນີນທຸລະກິດຂາຍກົງມີພຶດຕິກຳດັ່ງນີ້:

1. ດຳເນີນທຸລະກິດຂາຍກົງໂດຍບໍ່ມີສິນຄ້າ;
2. ດຳເນີນທຸລະກິດຂາຍກົງໂດຍບໍ່ມີໃບທະບຽນວິສາຫະກິດທີ່ລະບຸໝວດຂາຍກົງ;
3. ດຳເນີນທຸລະກິດຂາຍກົງໂດຍບໍ່ມີໃບອະນຸຍາດດຳເນີນທຸລະກິດຂາຍກົງ;
4. ລະເມີດສັນຍາ, ຄວາມລັບທາງທຸລະກິດ;
5. ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ ຫຼື ພະນັກງານ;
6. ດຳເນີນທຸລະກິດໂດຍ ຊັກຊວນໃຫ້ຄົນເຂົ້າຮ່ວມເປັນເຄືອຂ່າຍ ແລະ ເອົາຄ່າທຳນຽມເປັນລາຍໄດ້ຂອງການດຳເນີນທຸລະກິດ ແຕ່ບໍ່ໄດ້ມາຈາກການຂາຍສິນຄ້າ;
7. ບັງຄັບໃຫ້ຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ ຊື້ສິນຄ້າຂອງຕົນ;
8. ເກັບຄ່າທຳນຽມການເຂົ້າເປັນສະມາຊິກ, ຄ່າຝຶກອົບຮົມ, ຄ່າອຸປະກອນສົ່ງເສີມການຂາຍ ເກີນຄວາມເປັນຈິງ;
9. ຈ່າຍຄ່າຕອບແທນໂດຍບໍ່ຖືກຕາມແຜນການຈ່າຍຄ່າຕອບແທນ;
10. ສະໜອງ ສິນຄ້າ ທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ;
11. ໂຄສະນາ ຫຼື ສະໜອງຂໍ້ມູນຂ່າວສານກ່ຽວກັບສິນຄ້າ ທີ່ບໍ່ຖືກຕ້ອງ ຫຼື ເກີນຄວາມຈິງ;
12. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 15 ຂໍ້ຫ້າມ ສຳລັບຕົວແທນຂາຍກົງ

ຫ້າມຕົວແທນຂາຍກົງ ມີພຶດຕິກຳດັ່ງນີ້:

1. ດຳເນີນທຸລະກິດຂາຍກົງໂດຍບໍ່ມີສິນຄ້າ;
2. ດຳເນີນທຸລະກິດຂາຍກົງໂດຍບໍ່ມີໃບທະບຽນວິສາຫະກິດທີ່ລະບຸໝວດຂາຍກົງ;
3. ດຳເນີນທຸລະກິດໂດຍບໍ່ມີສັນຍາກັບ ຜູ້ດຳເນີນທຸລະກິດຂາຍກົງ;
4. ລະເມີດສັນຍາ, ຄວາມລັບທາງທຸລະກິດ;
5. ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ ຫຼື ພະນັກງານ;
6. ຂາຍສິນຄ້າໂດຍກົງ ເຖິງ ທີ່ຢູ່ອາໄສຂອງບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງທີ່ຢູ່ອາໄສນັ້ນກ່ອນ;
7. ສະເໜີ ຫຼື ຂາຍສິນຄ້າໂດຍບໍ່ສະແດງ ບັດສະມາຊິກຕົວແທນຂາຍກົງ;
8. ສະເໜີ ຫຼື ຂາຍສິນຄ້າ ທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ;
9. ໂຄສະນາ ຫຼື ສະເໜີຂໍ້ມູນຂ່າວສານກ່ຽວກັບສິນຄ້າ ທີ່ບໍ່ຖືກຕ້ອງ ຫຼື ເກີນຄວາມຈິງ;
10. ໃຊ້ຄວາມຮຸນແຮງ, ນາບຂູ່, ບັງຄັບ ໃຫ້ຜູ້ຂາຍອິດສະຫຼະ ຫຼື ຜູ້ຊົມໃຊ້ ຊື້ສິນຄ້າ;
11. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 16 ຂໍ້ຫ້າມ ສຳລັບຜູ້ຂາຍອິດສະຫຼະ

ຫ້າມຜູ້ຂາຍອິດສະຫຼະ ມີພຶດຕິກຳດັ່ງນີ້:

1. ລະເມີດສັນຍາ, ຄວາມລັບທາງທຸລະກິດ;
2. ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ ຫຼື ພະນັກງານ;
3. ດຳເນີນທຸລະກິດໂດຍບໍ່ມີສັນຍາກັບ ຜູ້ດຳເນີນທຸລະກິດຂາຍກົງ ຫຼື ຕົວແທນຂາຍກົງ;
4. ຂາຍສິນຄ້າໂດຍກົງ ເຖິງ ທີ່ຢູ່ອາໄສຂອງບຸກຄົນອື່ນໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງທີ່ຢູ່ອາໄສນັ້ນກ່ອນ;
5. ສະເໜີ ຫຼື ຂາຍສິນຄ້າໂດຍບໍ່ສະແດງ ບັດສະມາຊິກຜູ້ຂາຍອິດສະຫຼະ;
6. ຂາຍສິນຄ້າ ທີ່ບໍ່ມີຄຸນນະພາບ, ບໍ່ໄດ້ມາດຕະຖານ, ສິນຄ້າປອມແປງ, ສິນຄ້າລອກຮຽນແບບ, ສິນຄ້າຕ້ອງຫ້າມ;
7. ໂຄສະນາ ຫຼື ສະເໜີຂໍ້ມູນຂ່າວສານກ່ຽວກັບສິນຄ້າ ທີ່ບໍ່ຖືກຕ້ອງ ຫຼື ເກີນຄວາມຈິງ;
8. ໃຊ້ຄວາມຮຸນແຮງ, ນາບຂູ່, ບັງຄັບ ໃຫ້ຜູ້ຊົມໃຊ້ ຊື້ສິນຄ້າ;
9. ພຶດຕິກຳອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

ມາດຕາ 17 ຂໍ້ຫ້າມ ສໍາລັບບຸກຄົນ ແລະ ການຈັດຕັ້ງອື່ນ

ຫ້າມບຸກຄົນ ແລະ ການຈັດຕັ້ງອື່ນມີພຶດຕິກໍາດັ່ງນີ້ :

1. ສ້າງອຸປະສັກກີດຂວາງ, ແຊກແຊງການດໍາເນີນທຸລະກິດຂາຍກົງຂອງຜູ້ດໍາເນີນທຸລະກິດຂາຍກົງ, ຕົວແທນຂາຍກົງ ແລະ ຜູ້ຂາຍອິດສະຫຼະ ໃນເວລາດໍາເນີນທຸລະກິດຂາຍກົງ;
2. ໂຄສະນາບໍ່ຖືກຕ້ອງ ກ່ຽວກັບຄຸນນະພາບ, ມາດຕະຖານຂອງສິນຄ້າ ທີ່ພາໃຫ້ຜູ້ອື່ນເຂົ້າໃຈຜິດ ຫຼື ໃສ່ຮ້າຍປ້າຍສີຜູ້ດໍາເນີນທຸລະກິດຂາຍກົງ, ຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ;
3. ຊ່ວຍເຫຼືອ, ປົກປ້ອງຜູ້ດໍາເນີນທຸລະກິດຂາຍກົງ, ຕົວແທນຂາຍກົງ ຫຼື ຜູ້ຂາຍອິດສະຫຼະ ທີ່ລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
4. ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່, ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ ຫຼື ພະນັກງານ;
5. ເປັນສື່ກາງໃຫ້ສິນບົນ ແລະ ຮັບສິນບົນ ທີ່ເນື່ອງມາຈາກການດໍາເນີນທຸລະກິດຂາຍກົງ;
6. ພຶດຕິກໍາອື່ນທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 4
## ອົງການຄຸ້ມຄອງທຸລະກິດຂາຍກົງ

ມາດຕາ 18 ອົງການຄຸ້ມຄອງທຸລະກິດຂາຍກົງ

ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ການດໍາເນີນທຸລະກິດຂາຍກົງໃນຂອບເຂດທົ່ວປະເທດ ໂດຍປະສານສົມທົບກັບ ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຕາມສິດ ແລະ ພາລະບົດບາດຂອງຕົນ.

ອົງການຄຸ້ມຄອງທຸລະກິດຂາຍກົງ ແບ່ງເປັນ ສອງຂັ້ນ ດັ່ງນີ້:

- ຂັ້ນສູນກາງ ແມ່ນກົມການຄ້າພາຍໃນ;
- ຂັ້ນແຂວງ ແມ່ນພະແນກ ອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ.

ມາດຕາ 19 ສິດ ແລະ ໜ້າທີ່ຂອງກົມການຄ້າພາຍໃນ

ການຄຸ້ມຄອງທຸລະກິດຂາຍກົງ ກົມການຄ້າພາຍໃນມີສິດ ແລະ ໜ້າທີ່ດັ່ງນີ້:

1. ຄົ້ນຄວ້ານິຕິກໍາ ກ່ຽວກັບທຸລະກິດຂາຍກົງ ເພື່ອຄຸ້ມຄອງເປັນແຕ່ລະໄລຍະ;
2. ໂຄສະນາ, ເຜີຍແຜ່ນິຕິກໍາ ກ່ຽວກັບທຸລະກິດຂາຍກົງໃຫ້ແກ່ສັງຄົມ;
3. ຄົ້ນຄວ້າ, ພິຈາລະນາ ແລະ ອອກໃບອະນຸຍາດດໍາເນີນທຸລະກິດຂາຍກົງ;
4. ກໍານົດປະເພດ ຫຼື ຊະນິດສິນຄ້າໃນການດໍາເນີນທຸລະກິດຂາຍກົງເປັນແຕ່ລະໄລຍະ;
5. ຄຸ້ມຄອງ ແລະ ນໍາໃຊ້ເງິນຄໍ້າປະກັນ ໂດຍການປະສານວຽກງານຮ່ວມກັບທະນາຄານບ່ອນທີ່ຫົວໜ່ວຍທຸລະກິດຂາຍກົງໄດ້ເປີດບັນຊີໄວ້;

6. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນວຽກງານທຸລະກິດຂາຍກົງ;

7. ຕິດຕາມ, ກວດກາການເຄື່ອນໄຫວ, ການດໍາເນີນທຸລະກິດຂາຍກົງໃນຂອບເຂດທົ່ວປະເທດ;

8. ຮັບຄໍາຮ້ອງທຸກຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບ ຫຼື ເສຍຫາຍ ຈາກການດໍາເນີນທຸລະກິດຂາຍກົງ;

9. ເຮັດໜັງສືເຊີນ ຜູ້ດໍາເນີນທຸລະກິດຂາຍກົງ ຫຼື ຜູ້ທີ່ກ່ຽວຂ້ອງມາອະທິບາຍຊີ້ແຈງ ກ່ຽວກັບ ເອກະສານ ຫຼື ຫຼັກຖານ;

10. ແຈ້ງຂໍ້ມູນຂ່າວສານກ່ຽວກັບສິນຄ້າ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜູ້ຊົມໃຊ້;

11. ຕັກເຕືອນ ແລະ ສຶກສາອົບຮົມ ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບທຸລະກິດ ຂາຍກົງ;

12. ປັບໃໝຕາມທີ່ໄດ້ກໍານົດໄວ້ໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

13. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດການດໍາເນີນທຸລະກິດຂາຍກົງໃນຂອບເຂດທົ່ວປະ ເທດໃຫ້ ກະຊວງອຸດສາຫະກໍາ ແລະ ການຄ້າ ຊາບ ທຸກໆ 06 ເດືອນ;

14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ**

ການຄຸ້ມຄອງທຸລະກິດຂາຍກົງ ພະແນກອຸດສາຫະກໍາ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ນິຕິກໍາ ກ່ຽວກັບທຸລະກິດຂາຍກົງໃຫ້ແກ່ສັງຄົມ;
2. ຄຸ້ມຄອງ, ຕິດຕາມ, ກວດກາ ການເຄື່ອນໄຫວດໍາເນີນທຸລະກິດຂອງຫົວໜ່ວຍທຸລະກິດຂາຍກົງ, ຕົວແທນຂາຍກົງ ແລະ ຜູ້ຂາຍອິດສະຫຼະ;
3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນວຽກງານທຸລະກິດຂາຍກົງ;
4. ຮັບຄໍາຮ້ອງທຸກຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບ ຫຼື ເສຍຫາຍ ຈາກການດໍາເນີນທຸລະກິດຂາຍກົງ;
5. ເຮັດໜັງສືເຊີນ ຜູ້ດໍາເນີນທຸລະກິດຂາຍກົງ ຫຼື ຜູ້ທີ່ກ່ຽວຂ້ອງມາອະທິບາຍຊີ້ແຈງ ກ່ຽວກັບ ເອກະສານ ຫຼື ຫຼັກຖານ;
6. ແຈ້ງຂໍ້ມູນຂ່າວສານກ່ຽວກັບສິນຄ້າ ທີ່ກໍ່ໃຫ້ເກີດຄວາມເສຍຫາຍ ແກ່ຜູ້ຊົມໃຊ້;
7. ຕັກເຕືອນ ແລະ ສຶກສາອົບຮົມ ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການ ກ່ຽວກັບທຸລະກິດ ຂາຍກົງ;
8. ແຈ້ງການໃຫ້ຫ້ອງການອຸດສາຫະກໍາ ແລະ ການຄ້າເມືອງ ຕິດຕາມທຸລະກິດຂາຍກົງ ໃນຂອບເຂດເມືອງຂອງຕົນ ແລ້ວລາຍງານໃຫ້ພະແນກອຸດສາຫະກໍາ ແລະ ການຄ້າ ຊາບໃນເມື່ອມີສະພາບບໍ່ປົກກະຕິ;

9. ປັບໃໝຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

10. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດການດຳເນີນທຸລະກິດຂາຍກົງຢູ່ໃນທ້ອງຖິ່ນຂອງຕົນ ໃຫ້ ກົງການຄຸ້ມຄອງທຸລະກິດຂາຍກົງ ຂັ້ນສູນກາງຊາບ ທຸກໆ 06 ເດືອນ;

11. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 21 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ຫຼື ໄດ້ຮັບນະໂຍບາຍຕາມຄວາມເໝາະສົມ.

### ມາດຕາ 22 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາຕາມແຕ່ກໍລະນີເບົາ ຫຼື ໜັກ.

### ມາດຕາ 23 ມາດຕະການປັບໃໝ

ບຸກຄົນ, ນິຕິບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ພາຍຫຼັງທີ່ໄດ້ປະຕິບັດມາດຕະການ ກ່າວເຕືອນ, ສຶກສາອົບຮົມ ແຕ່ບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝ ຕາມແຕ່ລະກໍລະນີດັ່ງນີ້:

1. ດຳເນີນທຸລະກິດຂາຍກົງໂດຍບໍ່ມີໃບອະນຸຍາດດຳເນີນທຸລະກິດຂາຍກົງຈະຖືກປັບໃໝ ແຕ່ 1.000.000 ກີບ ຫາ 8.000.000 ກີບ;
2. ຈ່າຍຄ່າຕອບແທນໂດຍບໍ່ຖືກຕາມແຜນການຈ່າຍຄ່າຕອບແທນ ຈະຖືກປັບໃໝ ແຕ່ 500.000 ກີບ ຫາ 5.000.000 ກີບ;
3. ດຳເນີນທຸລະກິດໂດຍບໍ່ປະຕິບັດຕາມສັນຍາ ທີ່ອົງການຄຸ້ມຄອງທຸລະກິດຂາຍກົງໄດ້ຮັບຮອງແລ້ວ ຈະຖືກປັບໃໝຈຳນວນສອງເທົ່າຂອງມູນຄ່າຕອບແທນທີ່ລະບຸໄວ້ໃນສັນຍາ;
4. ເຂົ້າໄປສະຖານທີ່ ທີ່ຢູ່ອາໄສຂອງບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ ແຕ່ 300.000 ກີບ ຫາ 1.000.000 ກີບ;
5. ສະເໜີ ຫຼື ຂາຍສິນຄ້າໂດຍບໍ່ສະແດງ ບັດສະມາຊິກຕົວແທນຂາຍກົງ ຫຼື ບັດສະມາຊິກຜູ້ຂາຍອິດສະຫຼະ ຈະຖືກປັບໃໝແຕ່ 50.000 ກີບ ຫາ 500.000 ກີບ;
6. ດຳເນີນທຸລະກິດໂດຍ ຊັກຊວນໃຫ້ຄົນເຂົ້າຮ່ວມເຄືອຂ່າຍແລະ ເອົາຄ່າທຳນຽມເປັນລາຍໄດ້ ແຕ່ບໍ່ແມ່ນໄດ້ມາຈາກການຂາຍສິນຄ້າຈະຖືກປັບໃໝ 500.000 ກີບ ຕໍ່ສະມາຊິກ ໜຶ່ງຄົນ;

7. ບັງຄັບໃຫ້ຕົວແທນຂາຍກົງ ຫຼື ຜູ້ຂາຍອົດສະຫຼະຊື້ສິນຄ້າ ຈະຖືກປັບໃໝສອງເທົ່າຂອງສັນຍາ;

8. ເກັບຄ່າທຳນຽມການເຂົ້າເປັນສະມາຊິກ, ຄ່າຝຶກອົບຮົມ, ຄ່າອຸປະກອນສົ່ງເສີມການຂາຍ ເກີນຄວາມເປັນຈິງ ຈະຖືກປັບໃໝ 200.000 ກີບຕໍ່ສະມາຊິກໜຶ່ງຄົນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

### ມາດຕາ 24 ການຈັດຕັ້ງປະຕິບັດ

ມອບໃຫ້ກົມການຄ້າພາຍໃນ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ, ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ສຳລັບຫົວໜ່ວຍທຸລະກິດໃດ ທີ່ໄດ້ດຳເນີນທຸລະກິດຂາຍກົງ ກ່ອນປະກາດໃຊ້ຂໍ້ຕົກລົງສະບັບນີ້ ຕ້ອງປະກອບເອກະສານຄືນໃໝ່ຕາມ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ພາຍໃນກຳນົດ 90 ວັນ ນັບແຕ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ.

### ມາດຕາ 25 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດພາຍຫຼັງລົງລາຍເຊັນ ແລະ ຫຼັງຈາກ 15 ວັນ ນັບແຕ່ວັນພິມລົງໃນຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ລັດຖະມົນຕີ

ນ ເຂັມມະນີ ພົນເສນາ